ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ

ຫ້ອງການ

365

ເລກທີ........../ກຍ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 12 MAR 2015

# ແຈ້ງການ

**ຮຽນ:** ບັນດາຫ້ອງການກະຊວງ, ອົງການທຽບເທົ່າ ແລະ ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ.

- ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ.

**ເລື່ອງ:** ແຕ່ງຕັ້ງບຸກຄະລະກອນເພື່ອເປັນຜູ່ປະສານງານກັບໜ່ວຍງານຈົດໝາຍເຫດທາງລັດຖະການ ໃນການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນລະບົບເອເລັກໂຕຣນິກ.

- ອີງຕາມ ກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຈົດໝາຍເຫດທາງລັດຖະການ ເລກທີ 932/ຫລບ. ກລຂ, ລົງວັນທີ 26/6/2013;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທຳ ເລກທີ 802/ກຍ, ລົງວັນທີ 05 ກັນຍາ 2013 ວ່າດວ້ຍການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການ;
- ອີງຕາມ ຜົນຂອງກອງປະຊຸມທົບທວນກັບບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງໃນ ທ້າຍປີ 2014 ຜ່ານມານັ້ນ.

ຫ້ອງການ ກະຊວງຍຸຕິທຳ ໂດຍໄດ້ຮັບການມອບໝາຍ ແລະ ຕາງໜ້າໃຫ້ລັດຖະບານໃນການອອກຈົດໝາຍເຫດທາງລັດຖະການ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຫົວໜ້າຫ້ອງການ ກະຊວງ, ອົງການທຽບເທົ່າ ແລະ ອົງການຈັດຕັ້ງມະຫາຊົນ ອ້ອມຂ້າງສູນກາງ ຊາບວ່າ: ການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນລະບົບເອເລັກໂຕຣນິກ ໄດ້ດຳເນີນການເຄື່ອນໄຫວມາແຕ່ວັນທີ 11 ຕຸລາ 2013 ເປັນຕົ້ນມາ ແລະ ໄດ້ເປີດກອງປະຊຸມຮ່ວມກັບພາກສ່ວນຕ່າງໆຫຼາຍຄັ້ງແລ້ວ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ດຳເນີນຢ່າງເປັນປົກກະຕິນັ້ນ ກະຊວງຍຸຕິທຳຈຶ່ງສະເໜີຂໍໃຫ້ທ່ານສ້າງຕັ້ງໜ່ວຍງານປະສານງານ ແລະ ແຕ່ງຕັ້ງບຸກຄະລະກອນຜູ່ທີ່ຮັບຜິດຊອບວຽກງານນິຕິກຳຂອງບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການຈັດຕັ້ງມະຫາຊົນ ຈຳນວນ 3 ທ່ານ ເພື່ອເປັນຜູ່ປະສານງານກັບ ໜ່ວຍງານຈົດໝາຍເຫດທາງລັດຖະການ ໃນການລວບລວມບັນດານິຕິກຳມາພິມລົງໃນເວບໄຊຈົດໝາຍເຫດທາງລັດຖະການ ເຮັດໃຫ້ບັນດານິຕິກຳມີຜົນສັກສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 80 ຂອງກົດໝາຍວ່າດ້ວຍ ການສ້າງນິຕິກຳ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາຫ້ອງການ ກະຊວງ, ອົງການທຽບເທົ່າ ແລະ ອົງການຈັດຕັ້ງມະຫາຊົນ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການນີ້ດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖື.

**ຫົວໜ້າຫ້ອງການກະຊວງຍຸຕິທຳ;**

ພູທອນ ແກ້ວດວງມະນີ

ກົມໂຄສະນາເຜີຍແຜ່ກົດໝາຍ, ໜ່ວຍງານຈົດໝາຍເຫດທາງລັດຖະການ
ໂທລະສັບ 021 454824, ອີເມວ: webmaster@laoofficialgazette.gov.la
ເວບໄຊ: www.laoofficialgazette.gov.la